ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ່ 22/ນຍ

ນະຄອນຫຼວງວຽງຈັນ, ວັນທີ່ 26. 9. 2012

# ຄໍາສັ່ງ

ຂອງນາຍົກລັດຖະມົນຕີ ກ່ຽວກັບການແນະນໍາປະຕິບັດ

ຂໍ້ທີ່10.1 ຂອງຂໍ້ຕົກລົງສະບັບເລກທີ່ 32/ນຍ, ລົງວັນທີ່ 6 ມີນາ 2012

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ.

-ອີງຕາມ ໝວດທີ່ IV, ມາດຕາ 2 (ໃໝ່). ຂໍ້ທີ່ 8 ຂອງກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ່ 02/ສພຊ ລົງວັນທີ່ 6 ພຶດສະພາ 2003.

-ອີງຕາມຂໍ້ທີ່ 10.1 ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ່ 32/ນຍ, ລົງວັນທີ່ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ່ 25-26 ມັງກອນ 2012.

ເນື່ອງຈາກວ່າການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ໃນໄລຍະຜ່ານມາຍັງມີບາງຂະແໜງການ ແລະທ້ອງເຂົ້າໃຈເນື້ອໃນ ຂໍ້ທີ່ 10. 1 ວ່າຕ້ອງໃຫ້ປັບປຸງຄໍາສັ່ງ ສະບັບເລກທີ່ 17/ນຍ, ລົງວັນທີ່ 22 ກັນຍາ 2008ກ່ອນ, ຈຶ່ງລຶບລ້າງຄໍາສັ່ງເພີ່ມເຕີມ ສະບັບເລກທີ່ 09/ນຍ, ລົງວັນທີ່ 02 ພຶດສະພາ 2008 ແລະ ຂໍ້ຕົກລົງ ສະບັບ ເລກທີ່ 23/ນຍ, ລົງວັນທີ່ 24 ກຸມພາ 2009, ບາງພາກສ່ວນກໍ່ຍັງສືບຕໍ່ສະເໜີ ແລະ ປະຕິຕາມຄໍາສັ່ງເພີ່ມເຕີມ ສະບັບເລກທີ່ 09/ນຍ ແລະ ຂໍ້ຕົກລົງ ສະບັບເລກທີ່ 23/ນຍ, ຊຶ່ງເຫັນວ່າເປັນຄວາມເຂົ້າໃຈ ແລະ ປະຕິບັດບໍ່ຖືກຕ້ອງ.

ເພື່ອໃຫ້ບັນດາກະຊວງ ແລະ ອົງການກ່ຽວຂ້ອງຂອງລັດຖະບານ ກໍ່ຄືອໍານາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ຈັດຕັ້ງປະຕິບັດເນື້ອໃນຂໍ້ທີ່ 10.1 ຂອງຂໍ້ຕົກລົງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ່ 32/ນຍ, ລົງວັນທີ່ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງທີ່ວັນ 25 ມັງກອນ 2012 ມີຄວາມເປັນເອກະພາບ ແລະ ມີຄວາມສັກສິດ.

## ນາຍົກລັດຖະມົນຕີອອກຄໍາສັ່ງ:

1/. ລຶບລ້າງຄາສັ່ງເພີ່ມ ສະບັບ ເລກທີ່ 09/ນຍ, ລົງວັນທີ່ 02 ພຶດສະພາ 2008 ວ່າດ້ວຍການແກ້ໄຂບັນຫາໄມ້ຍືດ, ໄມ້ຮິບໂຮມ ແລະ ໄມ້ເນື້ອອ່ອນທີ່ຄົງຄ້າງ ແລະ ຂໍ້ຕົກລົງ ສະບັບທີ່ 23/ນຍ, ລົງວັນທີ່ 24 ກຸມພາ 2009 ວ່າດ້ວຍການອະນຸຍາດໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ສົ່ງໄມ້ແປຮູບທີ່ເປັນໄມ້ຄຸ້ມຄອງ 1, 2, 3 ແລະ ຕໍໄມ້ອອກຕ່າງ ປະເທດ ນບແຕ່ມື້ຂໍ້ຕົກລົງ ສະບັບເລກທີ່ 32/ນຍມີຜົນສັກສິດເປັນຕົ້ນ

ໄປ ໝາຍຄວາມວ່າ ຂໍ້ຕົກລົງ ສະບັບເລກທີ 32/ນຍ ໄດ້ລົບລ້າງນິຕິກຳ 2 ສະບັບດັ່ງກ່າວຢ່າງສິ້ນເຊີງ ແລະ ຖື ວ່ານິຕິກຳ 2 ສະບັບດັ່ງກ່າວບໍ່ມີຜົນສັກສິດແລ້ວ.

2/. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຮີບຮ້ອນຄົ້ນຄວ້າປັບປຸງ ບາງຈຸດທີ່ບໍ່ທັນຮັດກຸມໃນຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22/09/2008 ໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳກ່ຽວຂ້ອງ ແລະ ສະພາບຄວາມເປັນຈິງເພື່ອໃຫ້ໄດ້ປະກາດໃຊ້ໂດຍໄວ.

3/. ໃຫ້ບັນດາທ່ານລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຢ່າງເຂັ້ມງວດ ແລະ ດ້ວຍຄວາມຮັບຜິດຊອບສູງ.

4/. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ